ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ
ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ 1415/ຍທຂ.
ບໍລິຄຳໄຊ, ວັນທີ 27 ມີນາ 2026

**ໂຄງການ ກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ແຍກທາງ 13 ໃຕ້ - ບ້ານຫ້ວຍສາຍພາຍ, ເມືອງທ່າພະບາດ ແຂວງບໍລິຄຳໄຊ**

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ ໄດ້ຮັບການຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ ການປະມູນຈັດຊື້-ຈັດຈ້າງ ໂຄງການ ກໍ່ໂຄງການ ກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ແຍກທາງ 13 ໃຕ້-ບ້ານຫ້ວຍສາຍພາຍ, ເມືອງທ່າພະບາດ ແຂວງບໍລິຄຳໄຊ, ລວງຍາວ 3,851 ກິໂລແມັດ ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ, ສຳລັບບ້ອງເງິນທີ່ຈະຊຳລະສະສາງ ແມ່ນຈະໄດ້ສະເໜີເອົາເຂົ້າແຜນສາລະບານງົບປະມານແຫ່ງລັດໃນແຕ່ລະສົກປີ.
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດຳເນີນທຸລະກິດດ້ານການກໍ່ສ້າງ ຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງແມ່ນ 3 ປີ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.ການປະມູນນີ້ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມ ກົດໝາຍທີ່ກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄຳໄຊ ຫຼື ທົ່ວປະເທດ.
4. ບໍລິສັດທີ່ມີຄວາມເໝາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ຂະແໜງຂົວທາງ, ຢູ່ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໂທລະສັບ/ແຟັກ: 054-212091. ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ **8:00-12:00 ແລະ 13:00-16:00;** ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ເລີ່ມແຕ່ວັນທີ **1 ເມສາ 2026** ເປັນຕົ້ນໄປ, ໃນລາຄາ 500,000 ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນໃດຫາກຍື່ນຊ້າກ່ອນເວລາ **9:00 ໂມງເຊົ້າ, ຂອງວັນທີ 13 ພຶດສະພາ 2026**; ຈະບໍ່ໄດ້ຮັບພິຈາລະນາ ແລະ ເປີດຊອງ, ເງິນຄ່າຊອງປະມູນຈະບໍ່ໄດ້ສົ່ງຄືນ.
6. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ **8 ພຶດສະພາ 2026, ເວລາ 9:00** ໂມງເຊົ້າ.
7. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມຂະແໜງຂົວທາງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ **ໃນເວລາ 9:00 ໂມງເຊົ້າ, ຂອງວັນທີ 13 ພຶດສະພາ 2026** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ.
8. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າບໍ່ຫຼຸດ **1.5%** ຂອງມູນຄ່າປະມູນ, ໂດຍໜັງສືຄ້ຳປະກັນການປະມູນຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານທີ່ຖືກຕ້ອງກັບແບບຟອມ ທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນ.

ເຊັນແທນຫົວໜ້າພະແນກ
ຮອງຫົວໜ້າພະແນກ

ໂຄສາຈານ ແສນທະວີໄຊ

สแกนด้วย CamScanner